DSHS WASHINGTON STATE Department of Social and Health Services

WASHINGTON ECONOMIC JUSTICE ALLIANCE

# ການປ່ຽນແປງໃນການຊ່ວຍເຫລືອອາຫານຂອງຣັດຖະບານກາງແນວໃຫມ່ຈະສາທ້ອນເຖິງທ່ານແນວໃດ?

## ການປ່ຽນແປງໃນເງື່ອນໄຂຮັບເອົາຂອງໂຄງການຊ່ວຍເຫລືອເຄື່ອງຊຸບປະໂພກເພີ້ມເຕີມຂອງຣັດຖະບານກາງທີ່ຖືກອີງໃສ່ສະພາບຂອງການເຂົ້າເມືອງ

ຖ້າຫາກວ່າທ່ານເປັນ:

| ປະຊາຊົນ **U.S.** ແລະຄົນສັນຊາດ **U.S.** | ຄົນອາສັຍຢູ່ຖາວອນຖືກຕ້ອງຕາມກົດຫມາຍ (ຜູ້ຖືບັດຂຽວ) | ຜູ້ອົພຍົບ **COFA***ດ | ຄົນເຂົ້າມາຄົນຄືວບາເຣຕີ |
|---|---|---|---|

- ທ່ານຍັງຈະມີເງື່ອນໄຂໄດ້ຮັບຢູ່ສຳລັບສະວັດດີການ SNAP ຂອງຣັດຖະບານກາງ.

ຖ້າຫາກວ່າທ່ານເປັນ:

| ຄົນອາພຍົບ,ຄົນລີ້ພັຍຫລືຄົນເຂົ້າເມືອງດ້ວຍການປົກປ້ອງດ້ານມະນຸສທັມ |
|---|

- **ທ່ານຈະມີເງື່ອນໄຂໄດ້ຮັບສະວັດດີການອາຫານທີ່ຖືກອອກເງິນທຶນໃຫ້ຈາກຣັດ** ແທນທີ່ວ່າຈະແມ່ນສະວັດດີການ SNAP ຂອງຣັດຖະບານກາງ.
- ໃນເດືອນເມ 2026, DSHS ຈະຍ້າຍທ່ານໂດຍອັດຕະໂນມັດໂລດມາໃສ່ສະວັດດີການທີ່ຖືກອອກເງິນທຶນຂອງຣັດ.
- ຈຳນວນເງິນສະວັດດີການຂອງທ່ານຍັງຈະຢູ່ສຳເກົ່າ.
- ທ່ານຈະບໍ່ຕ້ອງໄດ້ຮ້ອງຂໍເອົາໃຫມ່ຍ້ອນການປ່ຽນແປງອັນນີ້.

---

## ການປ່ຽນແປງໃນກົດກຳນົດວຽກງານ **SNAP** ຂອງຣັດຖະບານກາງ

**ບຸກຄົນຜູ້ທີ່ໄດ້ຮັບການຊ່ວຍເຫລືອອາຫານແລະຜູ້ທີ່ສາມາດເຮັດວຽກໄດ້ແລະບໍ່ສອດຄ່ອງນຳການຍົກເວັ້ນຕ້ອງສອດຄ່ອງນຳກົດກຳນົດວຽກງານພາຍໄຕ້ກົດຫມາຍຂອງຣັດຖະບານກາງ.ຖ້າຫາກວ່າເຂົາເຈົ້າບໍ່ສອດຄ່ອງນຳ,ເຂົາເຈົ້າຈະມີເງື່ອນໄຂໄດ້ຮັບສະວັດດີການອາຫານພຽງແຕ່ສຳລັບສາມເດືອນເທົ່ານັ້ນໃນຣະຍະເວລາ 36 ເດືອນ.**

ຖ້າຫາກວ່າທ່ານເປັນ:

| ຫນຸ່ມກວ່າອາຍຸ **18** ປີຫລືແກ່ກວ່າອາຍ **65** ປີ | ຄົນອະເມຣິກັນອິນດຽນຫລືຄົນອາລາສ ກາມາແຕ່ກຳເນີດ | ຖືພາຕັ້ງທ້ອງ | ເສັຽອົງຄະ | ມີເດັກນ້ອຍຢູ່ໃນເຮືອນຂອງທ່ານຜູ້ທີ່ມີ ອາຍຸຫນຸ່ມກວ່າ **14** ປີ |
|---|---|---|---|---|

- **ທ່ານບໍ່ຕ້ອງໄດ້ສອດຄ່ອງນຳກົດກຳນົດວຽກງານອັນໃຫມ່.**
- ສະວັດດີການອາຫານຂອງທ່ານຈະດຳເນີນຕໍ່ໄປຕາມປົກກະຕິ.

ຖ້າຫາກວ່າທ່ານເປັນ:

| ນັກຮົບເກົ່າ | ບຸກຄົນທີ່ກຳລັງປະເຊີນຫນ້ານຳການບໍ່ມີ ເຮືອນຢູ່ | ຊາວຫນຸ່ມອາຍຸຕ່ຳກວ່າ **24** ປີຜູ້ທີ່ມີອາຍຸແກ່ອອກຈາກບ່ອນລັຽງເດັກກຳພ້າ | ອາຍຸ **18** ປີໄປຫາ **64** ປີທີ່ບໍ່ມີຄົນຫວັງເພິ່ງອາຍຸຕ່ຳກວ່າ **14** ປີ | ບໍ່ເສັຽອົງຄະຫລືຖືພາຕັ້ງທ້ອງ |
|---|---|---|---|---|

- **ທ່ານຈະຕ້ອງໄດ້ສອດຄ່ອງນຳກົດກຳນົດວຽກງານ** ເພື່ອຈະຍັງມີເງື່ອນໄຂໄດ້ຮັບຢູ່ຕໍ່ໄປສຳລັບສະວັດດີການອາຫານຂອງທ່ານ.
- **ໃນເວລາການກວດທວນຄືນເບິ່ງເງື່ອນ ໄຂຮັບເອົາເທື່ອຫນ້າຂອງທ່ານ,** ທ່ານຈະ ໄດ້ຮັບການກວດກັ່ນເບິ່ງແລະການແຈ້ງ ການປາກເປົ່າແລະໃບຫນັງສືແຈ້ງການກ່ຽວກັບກົດກຳນົດວຽກງານເຫລົ່ານັ້ນ.
- **ທ່ານຈະບໍ່ສູນເສັຽສະວັດດີການອາຫານຂອງທ່ານກ່ອນການກວດທວນຄືນແລະການກວດກັ່ນເບິ່ງເງື່ອນໄຂຮັບເອົາຂອງທ່ານ.**

## ການປ່ຽນແປງສຳລັບຄອບຄົວຜູ້ທີ່ກຳລັງໄດ້ຮັບໂຄງການຊ່ວຍເຫລືອພະລັງງານ ໃນເຮືອນທີ່ມີຣາຍໄດ້ຕ່ຳ

**ການປ່ຽນແປງໃນກົດໝາຍຂອງຣັດຖະບານກາງໃນໝໍ່ໆມານີ້ໄດ້ເອົາອອກໄປຄວາມສາມາດຂອງຣັດທີ່ຈະໃຊ້ການຮັບເອົາ LIHEAP ເພື່ອຈະເອົາໃຫ້ຄອບຄົວເງິນຫັກອອກສຳລັບຄ່ານ້ຳຄ່າໄຟສູງສຸດສຳລັບຄອບຄົວທີ່ບໍ່ມີຄົນອາຍຸແກ່(ອາຍຸ 60+) ຫລືຄົນເສັຽອົງຄະອານນີ້ໝາຍ ຄວາມວ່າ:**

- ສະວັດດີການຂອງທ່ານອາດຈະລຸດລົງຕ່ຳ.
- ການປ່ຽນແປງອັນນີ້ອາດຈະສະທ້ອນເຖິງສະວັດດີການຂອງທ່ານໃນເດືອນເມ 2026 ແລະຫລັງຈາກນັ້ນ.

## ທ່ານສາມາດເຮັດຫຍັງໄດ້ແດ່ຖ້າຫາກວ່າທ່ານຄິດວ່າການປ່ຽນແປງເຫລົ່ານີ້ຈະຖືກໃຊ້ໃສ່ທ່ານ?

- ✓ ເຮັດການທວນຄືນເບິ່ງເງື່ອນໄຂຮັບເອົາຂອງທ່ານໃຫ້ແລ້ວທັນກັບເວລາ.
- ✓ ໃນເວລານັ້ນ,ຮັບປະກັນວ່າຣາຍຣະອຽດຂອງທ່ານແມ່ນຖືກຕ້ອງ.
- ✓ ຖາມຄຳຖາມ:ທ່ານສາມາດໂທຫາ DSHS Contact Center ໄດ້ທີ່ເລກ 877-501-2233 ຫລືແວ່ຢ້ຽມ ຫ້ອງການບໍຣິການຊຸມນຸມຊົນທ້ອງຖິ່ນ ຂອງທ່ານ.

---

## ຕ້ອງການຄວາມຊ່ວຍເຫລືອຊອກຫາແຫລ່ງຊ່ວຍເຫລືອເພີ້ມເຕີມ:

- ທ່ານສາມາດຊອກຫາຄັງອາຫານທ້ອງຖິ່ນແລະແຫລ່ງຊ່ວຍເຫລືອບ່ອນອື່ນໆໂດຍການໂທຫາ 211 ຫລືແວ່ຢ້ຽມ wa211.org ເພື່ອຈະຮຽນຮູ້ເພີ້ມເຕີມ.
- ປື້ມນ້ອຍຄູ່ມືການບໍຣິການໃນຣາຄາລຸດຜ່ອນຂອງ DSHS ຫົວນີ້ມີການບໍຣິການທ້ອງຖິ່ນແລະແຫລ່ງຊ່ວຍເຫລືອມາກມາຍຫລາຍບ່ອນຊຶ່ງອາດຈະຊ່ວຍເຫລືອ ໄດ້ຫລາຍໃຫ້ແກ່ຄອບກົວຂອງທ່ານ.

**ສຳຄັນ:**
ຖ້າຫາກວ່າບຸກຄົນນຶ່ງຢູ່ໃນຄອບຄົວຊ່ວຍ ເຫລືອອາຫານກາຍເປັນບໍ່ມີເງື່ອນໄຂ ໄດ້ຮັບ,ຄົນອື່ນຢູ່ໃນຄອບຄົວຈະດຳເນີນ ໄດ້ຮັບສະວັດດີການອາຫານຢູ່ຕໍ່ໄປ.

*Compact of Free Association, ຫລື COFA, ຄົນອົບພະຍົບເຂົ້າມາແມ່ນ ບຸກຄົນມາຈາກ Freely Associated States — Micronesia, Marshall Islands and Palau — ຜູ້ທີ່ມີການອະນຸຍາດພິເສດໃຫ້ອາສັຍຢູ່, ເຮັດວຽກແລະສຶກສາຢູ່ໃນ U.S. ພາຍໄຕ້ Compact of Free Association.